**ມິຊຊາອາທິດທີ 4 ກໍານົດປາສກາ**

**ວັນທີ 12 ພຶດສະພາ 2019**



**ພຣະວໍລະສານໂດຍນັກບຸນຢວງ 10, 27-30**

ໃນເວລານັ້ນ, ພຣະເຢຊູເຈົ້າກ່າວວ່າ: ແກະເຮົາຟັງສຽງຂອງເຮົາ. ເຮົາຮູ້ຈັກແກະເຮົາແລະມັນມານໍາເຮົາ. ເຮົາປະທານຊີວິດນິລັນດອນໃຫ້ມັນແລະມັນຈະບໍ່ຕາຍເລີຍ ແລະບໍ່ມີໃຜມາຍາດເອົາມັນໄປຈາກມືເຮົາໄດ້. ສິ່ງທີ່ພຣະບິດາໄດ້ປະທານໃຫ້ເຮົານັ້ນປະເສີດກວ່າທຸກຢ່າງແລະບໍ່ມີໃຜຍາດເອົາສິ່ງນັ້ນໄປຈາກມືພຣະບິດາຂອງເຮົາໄດ້. ພຣະບິດາຂອງເຮົາ ແລະເຮົາເປັນໜຶ່ງດຽວກັນ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ຢງ 10, 27-30**

ວັນນີ້ເປັນວັນທີ່ພຣະກຣິສຕະຈັກເຊີນຊວນພວກເຮົາທຸກຄົນພາວະນາໃຫ້ທຸກກະແສຮຽກໃນໂລກ. ເມື່ອເວົ້າເຖິງກະແສຮຽກ, ສ່ວນຫລາຍພວກເຮົາມັກຈະຄິດເຖິງກ່ອນອື່ນໝົດແມ່ນກະແສຮຽກເປັນນັກບວດ: ຄຸນພໍ່, ຄຸນແມ່. ຈາກນັ້ນກໍແມ່ນກະແສຮຽກຂອງການສ້າງຄອບຄົວ. ແຕ່ພວກເຮົາລືມໄປວ່າກະແສຮຽກທໍາອິດຂອງພວກເຮົາແຕ່ລະຄົນຄືການເປັນລູກຂອງພຣະເຈົ້າ. ພວກເຮົາທຸກຄົນຖືກສ້າງມາແລະຖືກຮຽກເອີ້ນໃຫ້ມີຊີວິດແລະແມ່ນຊີວິດຢູ່ຮ່ວມກັບພຣະເປັນເຈົ້າຕະຫລອດໄປ. ນີ້ແລແມ່ນກະແສຮຽກສໍາຄັນຂອງພວກເຮົາແຕ່ລະຄົນບໍ່ວ່າຈະເປັນນັກບວດຫລືຄາລະວາດ. ແຕ່ຄໍາວ່າກະແສຮຽກມີຄວາມໝາຍແນວໃດ? ເຮັດແນວໃດພວກເຮົາຈຶ່ງຮູ້ຈັກວ່າຕົນມີກະແສຮຽກ? ແລະກະແສຮຽກນີ້ມາຈາກໃສແລະຈະນໍາພວກເຮົາໄປໃສ?

ຄວາມໝາຍທໍາອິດຂອງຄໍາວ່າກະແສຮຽກຄືການຮຽກເອີ້ນແລະການຕອບຮັບ. ມະນຸດແຕ່ລະຄົນລ້ວນແຕ່ມີກະແສຮຽກແຕກຕ່າງກັນ, ແຕ່ທຸກກະແສຮຽກລ້ວນແຕ່ມາຈາກຜູ້ດຽວກັນນັ້ນຄືພຣະເຈົ້າ. ຖ້າພວກເຮົາຢາກຮູ້ຈັກວ່າຕົນມີກະແສຮຽກຫລືບໍ່ ສິ່ງສໍາຄັນຄືພວກເຮົາຕ້ອງຮັບຟັງ. ຟັງສຽງປາກເວົ້າຂອງພຣະເຈົ້າຜ່ານທາງວາຈາຂອງພຣະອົງ. ດັ່ງທີ່ພຣະເຢຊູເຈົ້າກ່າວໃນວັນນີ້: « ແກະເຮົາຟັງສຽງຂອງເຮົາ. ເຮົາຮູ້ຈັກແກະເຮົາແລະມັນມານໍາເຮົາ ». ຟັງສຽງຂອງພຣະເຈົ້າແມ່ນແນວໃດ? ຟັງສຽງຂອງພຣະເຈົ້າກ່ອນອື່ນໝົດແມ່ນການເປີດໃຈເພື່ອເຂົ້າສູ່ການສື່ສານພົວພັນກັບພຣະອົງ. ການຮັບຟັງສະແດງອອກເຖິງທັດສະນະຂອງການນົບນອບຕໍ່ຜູ້ທີ່ປາກເວົ້າກັບພວກເຮົາ. ຈາກນັ້ນ, ການນົບນອບຈະນໍາພວກເຮົາໄປສູ່ຄວາມເຊື່ອ. ແລະຄວາມເຊື່ອຈະທໍາໃຫ້ພວກເຮົາຮູ້ຈັກແລະຕິດຕາມຜູ້ທີ່ຊົງຮຽກເອີ້ນພວກເຮົານັ້ນຄືພຣະເຈົ້າ.

ແລະບ່ອນທີ່ພວກເຮົາສາມາດຟັງສຽງຂອງພຣະເຈົ້າໄດ້ນັ້ນຄືວາຈາຂອງພຣະອົງ. ເພາະວາຈາຂອງພຣະເຈົ້າຈະທໍາໃຫ້ພວກເຮົາຄົ້ນພົບຕົວເອງຫລາຍຂຶ້ນ. ແລະໃນເວລາດຽວກັນ, ພວກເຮົາກໍຮູ້ຈັກຜູ້ທີ່ຊົງຮຽກເອີ້ນພວກເຮົາຫລາຍຂຶ້ນເຊັ່ນດຽວກັນ. ແລະຈຸດໝາຍປາຍທາງຂອງການຮູ້ຈັກພຣະເຈົ້າຄືການໄດ້ຢູ່ຮ່ວມກັບພຣະອົງໃນເມືອງສະຫວັນ.

ຂໍໃຫ້ວາຈາຂອງພຣະເຈົ້າໃນວັນນີ້ເປັນສຽງຮຽກເອີ້ນພວກເຮົາໃຫ້ເປີດໃຈແລະຫັນມາຟັງພຣະອົງ. ເພື່ອພວກເຮົາຈະໄດ້ສືບຕໍ່ໃນກະແສຮຽກຂອງການເປັນລູກພຣະເຈົ້າ. ຖ້າພວກເຮົາຫລົງທາງ ກໍໃຫ້ພວກເຮົາຫັນມາຫາເສັ້ນທາງຂອງພຣະອົງ. ຖ້າພວກເຮົາຢູ່ໃນຄວາມມືດກໍໃຫ້ພວກເຮົາຟັງສຽງຂອງພຣະເຈົ້າແລະອອກມາຫາພຣະອົງ. ຖ້າພວກເຮົາຢູ່ໃນຄວາມສິ້ນຫວັງບົນເສັ້ນທາງຊີວິດ ກໍໃຫ້ພວກເຮົາໄວ້ວາງໃຈໃນການນໍາພາຂອງນາຍຊຸມພາບານຜູ້ດີນັ້ນຄືອົງພຣະເຢຊູກຣິສໂຕເຈົ້າ. ເພາະພຣະອົງເປັນຫົນທາງ, ຄວາມຈິງແລະຊີວິດ. ບໍ່ມີໃຜສາມາດໄປຫາພຣະບິດາເຈົ້າໄດ້ ໂດຍບໍ່ຜ່ານທາງພຣະອົງ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ